ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ລັດວິສາຫະກິດລິດໄຟແຫ່ງຊາດລາວ

ເລກທີ 363 /ລລຟລ
ນະຄອນຫຼວງວຽງຈັນ ,ວັນທີ 9 ພະຈິກ 2026

ໜັງສືແຈ້ງເຊີນປະມູນ

1. ລັດວິສາຫະກິດລິດໄຟແຫ່ງຊາດລາວ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ປະເພດລິດໄຟຟ້າ ຂະໜາດນ້ອຍ, ກຳລັງມໍເຕີ 55-100 kw, ຄວາມຈຸແບັດເຕີລີ 30-50 Kwh ໄລຍະທາງຕໍ່ການສາກ 300-500 ກມ, 5 ບ່ອນນັ່ງ, ຂັບເຄື່ອນລໍ້ໜ້າ, ເກຍໂອໂຕ, ພວງມະໄລຊ້າຍເດີມ ຈຳນວນ 02 ຄັນ, ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຢື້ນຊ່ອງປະມູນ ສຳລັບການສະໜອງພາຫະນະເປັນປະເພດລິດໄຟຟ້າຂະໜາດນ້ອຍ ຈຳນວນ 02 ຄັນ ເພື່ອປະກອບເປັນລິດ ຮັບໃຊ້ວຽກງານບໍລິຫານ ຂອງ ລັດວິສາຫະກິດລິດໄຟແຫ່ງຊາດລາວ. ກຳນົດເວລາໃນການມອບ-ຮັບລິດ ແມ່ນພາຍໃນ 45 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນການ ປະມູນ. ສາມາດຕິດຕໍ່ພົວພັນຊື້ເອກະສານປະມູນໄດ້ທີ່ ລັດວິສາຫະກິດລິດໄຟແຫ່ງຊາດລາວ ສະຖານີ ລິດໄຟວຽງຈັນ(ຄຳສະຫວາດ), ບ້ານຄຳສະຫວາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເບີໂທຕິດຕໍ່ 020 55430922, 020 54645979
4. ບໍລິສັດ ຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການຈຳໜ່າຍລິດໄຟຟ້າ ແລະ ໃບ ມອບພັນທະອາກອນປີ 2025 ທີ່ຖືກຕ້ອງຕາມກົດໝາຍ;
5. ເອກະສານປະມູນເລີ່ມຂາຍແຕ່ວັນທີ 10 ພະຈິກ 2026 ຫາ ວັນທີ 14 ທັນວາ 2026 ລາຄາຊອງປະມູນ ແມ່ນ 2,000,000 ກີບ/ຄັນ; ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
6. ທຸກໆຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 14 ທັນວາ 2026 ແລະ ຊອງປະມູນ ທຸກໆຊອງຈະໄດ້ເປີດໃນ ວັນທີ 14 ທັນວາ 2026 ເວລາ 09:00 ໂມງ ຂອງວັນດຽວກັນ ທີ່ຫ້ອງປະຊຸມ ລັດວິສາຫະກິດລິດໄຟແຫ່ງຊາດລາວ, ສະຖານີລິດໄຟວຽງຈັນ(ຄຳສະຫວາດ), ບ້ານຄຳສະຫວາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່

ສົນໃຈເຂົ້າຮ່ວມ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;

7. ທຸກຊອງປະມູນຕ້ອງມີການຄ້ຳປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ໜ້ອຍ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອມດ້ວຍ.

ຜູ້ອຳນວຍການໃຫຍ່

ດາວຈິນດາ ສີຫາລາດ